DEPARTMENT OF HEALTH CARE SERVICES

# ຂໍ້ຄວາມກ່ຽວກັບພາສາ ແລະ ການສົ່ງຂໍ້ຄວາມໃນທົ່ວໂລກ

*[ຂໍ້ຄວາມໃບປົວ/ແຊກ]*

ຮຽນ ທ່ານສະມາຊິກ Medi-Cal ທີ່ຮັກແພງ,

ໃນຊ່ວງທີ່ມີການປະກາດພາວະສຸກເສີນດ້ານສາທາລະນະສຸກ (PHE) ຈາກພະຍາດໂຄວິດ-19 ນີ້, ທ່ານສາມາດຮັກສາການຄຸ້ມຄອງຂອງທ່ານໄວ້ໄດ້ ໂດຍບໍ່ຄຳນຶງເຖິງການປ່ຽນແປງໃດໆ ໃນສະຖານະການຂອງທ່ານ. ແນວໃດກໍຕາມ, ເມື່ອ PHE ຈາກພະຍາດ-19 ສິ້ນສຸດລົງ, ເຂດປົກຄອງຂອງທ່ານຈະກວດເບິ່ງວ່າ ທ່ານຍັງຈະມີເງື່ອນໄຂໄດ້ຮັບ Medi-Cal ແບບຟຣີ ຫຼື ແບບລາຄາຖືກ ຫຼື ບໍ່. ຖ້າທ່ານ ຫຼື ບາງຄົນໃນຄອບຄົວຂອງທ່ານໄດ້ຮັບຈົດໝາຍຈາກເຂດປົກຄອງ ເພື່ອຂໍເອົາຂໍ້ມູນກ່ຽວກັບການຄຸ້ມຄອງຈາກ Medi-Cal ຂອງທ່ານ, ກະລຸນາໃຫ້ຂໍ້ມູນທີ່ຮ້ອງຂໍດັ່ງກ່າວ.

**ການປ່ຽນແປງໃນສະຖານະການຕ່າງໆ**

ກະລຸນາສືບຕໍ່ລາຍງານທຸກການປ່ຽນແປງໃນຄອບຄົວຂອງທ່ານໃຫ້ແກ່ຫ້ອງການຄຂອງເຂດປົກຄອງປະຈໍາທ້ອງຖິ່ນຂອງທ່ານ. ເຊິ່ງລວມເຖິງການປ່ຽນແປງຕ່າງໆຕໍ່ລາຍຮັບ, ສະຖານະຄວາມພິການ, ເບີໂທລະສັບ ຫຼື ທີ່ຢູ່ທາງໄປສະນີຂອງທ່ານ. ນອກຈາກນັ້ນ ທ່ານກໍຄວນລາຍງານອີກ ຖ້າຫາກມີຄົນໃນຄອບຄົວຂອງທ່ານຖືພາ, ຖ້າມີຄົນຍ້າຍເຂົ້າມາ ຫຼື ສິ່ງອື່ນໆທີ່ອາດຈະມີຜົນກະທົບກັບການມີເງື່ອນໄຂໄດ້ຮັບ Medi-Cal ຂອງທ່ານ. ການລາຍງານການປ່ຽນແປງຕ່າງໆເຫຼົ່ານີ້ ສາມາດຈະຊ່ວຍໃຫ້ທ່ານສືບຕໍ່ໄດ້ຮັບການຄຸ້ມຄອງຈາກ Medi-Cal ຫຼັງຈາກສິ້ນສຸດ PHE ຈາກພະຍາດໂຄວິດ-19.

**ການລາຍງານຂໍ້ມູນຕິດຕໍ່**

ມັນເປັນສິ່ງສຳຄັນສຳລັບເຂດປົກຄອງ ທີ່ຈະມີຂໍ້ມູນຕິດຕໍ່ໃນຂະນະນີ້ຂອງທ່ານ. ກະລຸນາລາຍງານທຸກການປ່ຽນແປງຕໍ່ຂໍ້ມູນຕິດຕໍ່ຂອງທ່ານ ເພື່ອໃຫ້ທ່ານຈະບໍ່ພາດການໄດ້ຮັບຂໍ້ມູນສຳຄັນ ກ່ຽວກັບການຄຸ້ມຄອງຂອງ Medi-Cal ຂອງທ່ານ. ກະລຸນາລາຍງານຂໍ້ມູນຕິດຕໍ່ທີ່ອັບເດດໃໝ່ທັງໝົດ ເຊັ່ນ: ເບີໂທລະສັບ, ທີ່ຢູ່ອີເມວ ຫຼື ທີ່ຢູ່ເຮືອນ

ໃຫ້ແກ່ຫ້ອງການຂອງເຂດປົກຄອງປະຈຳທ້ອງຖິ່ນຂອງທ່ານ ທາງອອນລາຍ ຫຼື ທາງໂທລະສັບ, ອີເມວ, ແຟັກ ຫຼື ໂດຍການຊ້ອງໜ້າ.
ທ່ານສາມາດຊອກຫາບັນຊີລາຍຊື່ຂອງບັນດາຫ້ອງການຂອງເຂດປົກຄອງໄດ້ທີ່ http://dhcs.ca.gov/COL. ນອກຈາກນັ້ນ ທ່ານຍັງສາມາດອັບເດດຂໍ້ມູນຕິດຕໍ່ຂອງທ່ານໄດ້ ທາງອອນລາຍທີ່ CoveredCA.com ຫຼື BenefitsCal.org.

**ການຂໍຂໍ້ມູນ**
ຖ້າທ່ານ ຫຼື ບຸກຄົນໃດໜຶ່ງໃນຄອບຄົວຂອງທ່ານ ໄດ້ຮັບຈົດໝາຍຈາກເຂດປົກຄອງ ເພື່ອຂໍເອົາຂໍ້ມູນກ່ຽວກັບການຄຸ້ມຄອງຂອງ Medi-Cal ຂອງທ່ານ, ຂໍໃຫ້ທ່ານກະລຸນາສະໜອງຂໍ້ມູນໃຫ້. ສິ່ງນີ້ຈະຊ່ວຍໃຫ້ເຂດປົກຄອງ ສາມາດຮັບປະກັນໄດ້ວ່າ ການຄຸ້ມຄອງຂອງ Medi-Cal ຂອງທ່ານຍັງຄົງໃຊ້ໄດ້ຢູ່.

**ມີຄຳຖາມບໍ?**
ຖ້າທ່ານມີຄຳຖາມໃດໆ ຫຼື ຕ້ອງການຄວາມຊ່ວຍເຫຼືອ ກ່ຽວກັບການເຂົ້າເຖິງການຄຸ້ມຄອງຂອງ Medi-Cal ຂອງທ່ານ ຫຼື ຖ້າ Medi-Cal ຂອງທ່ານຖືກຢຸດເຊົາ, ກະລຸນາຕິດຕໍ່ຫາຫ້ອງການຂອງເຂດປົກຄອງປະຈຳທ້ອງຖິ່ນຂອງທ່ານ. ສາມາດຊອກເບິ່ງບັນດາຄຳຖາມທີ່ມັກຖາມເລື້ອຍໆ ແລະ ຄຳຕອບ ໄດ້ທີ່ [ໜ້າ FAQ (ຄຳຖາມທີ່ມັກຖາມເລື້ອຍໆ)].

| *[ແບບເນີໂຄສະນາເວັບໄຊ]* |
|---|
| **ສິ່ງສຳຄັນ**: ທ່ານໄດ້ລົງທະບຽນເຂົ້າຮ່ວມ Medi-Cal ບໍ? ຂໍ້ມູນຕິດຕໍ່ຂອງທ່ານໄດ້ມີການປ່ຽນແປງໃນໄລຍະສອງປີຜ່ານມາບໍ? ໃຫ້ຂໍ້ມູນຕິດຕໍ່ທີ່ອັບເດດໃໝ່ຂອງທ່ານ ໃຫ້ແກ່ຫ້ອງການເຂດປົກຄອງຂອງທ່ານ |

ເພື່ອໃຫ້ທ່ານສາມາດຮັກສາການລົງທະບຽນເຂົ້າຮ່ວມໄວ້ໄດ້.
ຊອກຫາຫ້ອງການເຂດປົກຄອງປະຈຳທ້ອງຖິ່ນຂອງທ່ານ.




| *[ຂໍ້ຄວາມໃນເວັບໄຊ ສຳລັບໜ້າຫ້ອງການເຂດປົກຄອງ]* |
| --- |
| ໃນຊ່ວງທີ່ມີການປະກາດພາວະສຸກເສີນດ້ານສາທາລະນະສຸກ (PHE) ຈາກພະຍາດໂຄວິດ-19 ນີ້, ຜູ້ໄດ້ຮັບຜົນປະໂຫຍດຈາກ Medi-Cal ຈະສືບຕໍ່ໄດ້ຮັບການລົງທະບຽນເຂົ້າຮ່ວມໂຄງການດັ່ງກ່າວ. ຖ້າຂໍ້ມູນຕິດຕໍ່ ຫຼື ສະຖານະການຕ່າງໆໃນຄອບຄົວຂອງທ່ານມີການປ່ຽນແປງ, ກະລຸນາອັບເດດຂໍ້ມູນຂອງທ່ານໃນມື້ນີ້ເລີຍ ໂດຍການຕິດຕໍ່ຫາຫ້ອງການເຂດປົກຄອງປະຈຳທ້ອງຖິ່ນຂອງທ່ານ ທີ່: [ເບີໂທລະສັບ, ປະຕູ SAWS ແລະ ລິ້ງເຊື່ອມຕໍ່ໄປຍັງສະໝຸດລາຍຊື່ຂອງເຂດປົກຄອງ]. ສິ່ງນີ້ອາດຈະຊ່ວຍໃຫ້ທ່ານສາມາດຮັກສາການຄຸ້ມຄອງຂອງ Medi-Cal ຂອງທ່ານໄວ້ໄດ້ ຫຼັງຈາກການສິ້ນສຸດ PHE ຈາກພະຍາດໂຄວິດ-19. |

<table>
<tr><th colspan="2">[ສື່ສັງຄົມ]</th></tr>
<tr>
<td>ພະນັກງານກວດກາການມີເງື່ອນໄຂໄດ້ຮັບ Medi-Cal ປະຈຳເຂດປົກຄອງຂອງທ່ານ ອາດຈະຕິດຕໍ່ຫາທ່ານໂດຍໄວ ເພື່ອຮັບປະກັນໃຫ້ຂໍ້ມູນການຕິດຕໍ່ຂອງທ່ານມີຄວາມຖືກຕ້ອງ. ຖ້າບໍ່ໄດ້ຮັບການຕິດຕໍ່, ກະລຸນາໃຫ້ຂໍ້ມູນທີ່ອັບເດດໃໝ່ຂອງທ່ານໃຫ້ແກ່ເຂດປົກຄອງ ເພື່ອໃຫ້ທ່ານສາມາດສືບຕໍ່ໄດ້ຮັບຂໍ້ມູນທີ່ສຳຄັນ ກ່ຽວກັບການຄຸ້ມຄອງຂອງ Medi-Cal ຂອງທ່ານ: http://dhcs.ca.gov/COL. [ສາມາດແຊກຂໍ້ມູນຕິດຕໍ່ຂອງເຂດປົກຄອງປະຈຳທ້ອງຖິ່ນ ໄດ້ໃນບ່ອນນີ້]</td>
<td>


</td>
</tr>
<tr>
<td>ທ່ານໄດ້ຍ້າຍບ່ອນຢູ່ບໍ? ແຈ້ງໃຫ້ພະນັກງານກວດກາການມີເງື່ອນໄຂໄດ້ຮັບ Medi-Cal ປະຈຳເຂດປົກຄອງຂອງທ່ານຮູ້. ມັນເປັນສິ່ງສຳຄັນທີ່ຈະຕ້ອງສະໜອງຂໍ້ມູນອັບເດດໃໝ່ຂອງທ່ານ ເພື່ອໃຫ້ທ່ານສາມາດສືບຕໍ່ໄດ້ຮັບຂໍ້ມູນ</td>
<td>
</td>
</tr>
</table>

<table>
<tr>
<td>
ກ່ຽວກັບການຄຸ້ມຄອງຂອງ Medi-Cal ເຊັ່ນ: ຊອງເອກະສານການຕໍ່ອາຍຸ, ແຈ້ງການກ່ຽວກັບການປ່ຽນແປງຜົນປ ະໂຫຍດ ຫຼື<br>
ການແຈ້ງເຕືອນທີ່ສຳຄັນອື່ນໆ:<br>
http://dhcs.ca.gov/COL<br>
[ສາມາດແຊກຂໍ້ມູນຕິດຕໍ່ຂອງເຂດປົກຄອງປະຈຳທ້ອງຖິ່ນ ໄດ້ໃນບ່ອນນີ້]
</td>
<td>


</td>
</tr>
<tr>
<td>
ທ່ານໄດ້ເລີ່ມເຮັດວຽກໃໝ່ບໍ?<br>
ແຈ້ງໃຫ້ພະນັກງານກວດກາການມີເງື່ອນໄຂໄດ້ຮັບ Medi-Cal ປະຈຳເຂດປົກຄອງຂອງທ່ານຮູ້. ມັນເປັນສິ່ງສຳຄັນທີ່ທ່ານຕ້ອງລາຍງານລາຍຮັບໃໝ່ຂອງທ່ານໃຫ້ແກ່ເຂດປົກຄອງໃຫ້ໄວເທົ່າທີ່ຈະໄວໄດ້.<br>
ທ່ານຍັງຄົງຈະໄດ້ຮັບການຄຸ້ມຄອງຂອງ Medi-Cal ຂອງທ່ານ ຢູ່ໃນຊ່ວງທີ່ມີການປະກາດພາວະສຸກເສີນດ້ານສາທາລະນະສຸກຈາກພະຍາດໂຄວິດ-19: http://dhcs.ca.gov/COL.<br>
<br>
ທ່ານຖືພາບໍ?<br>
ແຈ້ງໃຫ້ພະນັກງານກວດກາການມີເງື່ອ
</td>
<td>




</td>
</tr>
</table>

| | |
|---|---|
| ນໄຂໄດ້ຮັບ Medi-Cal ປະຈຳເຂດປົກຄອງຂອງທ່ານຮູ້. ມັນເປັນສິ່ງສຳຄັນທີ່ທ່ານຈະຕ້ອງໄດ້ລາຍງານ ກ່ຽວກັບທຸກການປ່ຽນແປງໃນຄອບຄົວ ໃຫ້ໄວເທົ່າທີ່ຈະໄວໄດ້. ທ່ານຍັງຄົງຈະໄດ້ຮັບການຄຸ້ມຄອງຂອງ Medi-Cal ຂອງທ່ານ ຢູ່ໃນຊ່ວງທີ່ມີການປະກາດພາວະສຸກເສີນດ້ານສາທາລະນະສຸກ ຈາກພະຍາດໂຄວິດ-19: [http://dhcs.ca.gov/COL](http://dhcs.ca.gov/COL). | |
| ທ່ານຕ້ອງລາຍງານທຸກການປ່ຽນແປງ ໃນຄອບຄົວໃຫ້ແກ່ຫ້ອງການເຂດປົກຄອງຂອງ Medi-Cal ຂອງທ່ານໃຫ້ໄວເທົ່າທີ່ຈະໄວໄດ້. ທ່ານສາມາດລາຍງານການປ່ຽນແປງໂດຍການຊ້ອງໜ້າ, ທາງອອນລາຍ ຫຼື ທາງໂທລະສັບ, ອີເມວ ຫຼື ແຟັກ. ທ່ານຍັງຄົງຈະໄດ້ຮັບການຄຸ້ມຄອງຂອງ Medi-Cal ຂອງທ່ານ ຢູ່ໃນຊ່ວງທີ່ມີການປະກາດພາວະສຸກເສີນດ້ານສາທາລະນະສຸກ ຈາກພະຍາດໂຄວິດ-19: [http://dhcs.ca.gov/COL](http://dhcs.ca.gov/COL). |  |

DEPARTMENT OF HEALTH CARE SERVICES

| [*ຂໍ້ຄວາມກ່ຽວກັບບົດເວົ້າໃນການໂທ*] | |
|---|---|
| ຜູ້ໂທທີ່ເປັນຜູ້ໄດ້ຮັບຜົນປະໂຫຍດ | ພະນັກງານຮັບສາຍ |
| ຂ້າພະເຈົ້າຈຳເປັນຕ້ອງໄດ້ລາຍງານທຸກການປ່ຽນແປງໃນຄອບຄົວເພື່ອຮັກສາການຄຸ້ມຄອງຂອງ Medi-Cal ຂອງຕົນໄວ້ບໍ? | **ຄຳຕອບຂອງເຂດປົກຄອງ/ແຜນການດູແລແບບມີການຄຸ້ມຄອງ/ຄູ່ຮ່ວມງານໃນຊຸມຊົນ**: ແມ່ນແລ້ວ, ທ່ານຕ້ອງໄດ້ລາຍງານທຸກການປ່ຽນແປງໃນຄອບຄົວຂອງທ່ານ ເຊັ່ນ ລາຍຮັບ, ຖ້າມີບຸກຄົນໃດໜຶ່ງຖືພາ, ມີສະມາຊິກໃໝ່ເຂົ້າມາໃນຄອບຄົວ ແລະ ທຸກການປ່ຽນແປງຕໍ່ທີ່ຢູ່ຂອງທ່ານໃຫ້ແກ່ຫ້ອງການເຂດປົກຄອງປະຈຳທ້ອງຖິ່ນຂອງທ່ານ. ສິ່ງນີ້ສາມາດຈະຊ່ວຍຮັບປະກັນໃຫ້ທ່ານສືບຕໍ່ໄດ້ຮັບການຄຸ້ມຄອງຂອງ Medi-Cal ຂອງທ່ານ ຫຼັງຈາກສິ້ນສຸດການປະກາດພາວະສຸກເສີນດ້ານສາທາລະນະສຸກຈາກພະຍາດໂຄວິດ-19 ຂອງລັດຖະບານກາງ. [ແຊກຂໍ້ມູນຕິດຕໍ່ຂອງເຂດປົກຄອງປະຈຳທ້ອງຖິ່ນ] |
| ພວກເຮົາຈຳເປັນຕ້ອງຕື່ມຂໍ້ມູນໃສ່ ແລະ ສົ່ງຊອງເອກະສານການຕໍ່ອາຍຸກັບຄືນບໍໃນເວລາພວກເຮົາໄດ້ຮັບມັນມາ? | **ຄຳຕອບຂອງເຂດປົກຄອງ/ບັນດາແຜນການດູແລແບບມີການຄຸ້ມຄອງ/ຄູ່ຮ່ວມງານໃນຊຸມຊົນ**: ແມ່ນແລ້ວ, ມັນເປັນສິ່ງສຳຄັນທີ່ຜູ້ໄດ້ຮັບຜົນປະໂຫຍດຂອງ Medi-Cal ຕ້ອງຕອບສະໜອງຕາມການຮ້ອງຂໍຂອງເຂດປົກຄອງສຳລັບຂໍ້ມູນທີ່ອັບເດດໃໝ່, ລວມທັງຊອງເອກະສານການຕໍ່ອາຍຸ. ສິ່ງນີ້ຈະເປັນການເຮັດໃຫ້ແນ່ໃຈວ່າເຂດປົກຄອງມີຂໍ້ມູນລ້າສຸດທີ່ຕົນຕ້ອງການໃນການຕໍ່ອາຍຸກ |

| | |
|---|---|
| | ານຄຸ້ມຄອງຂອງ Medi-Cal ຂອງທ່ານ. ນອກຈາກນັ້ນ ມັນຍັງຈະຊ່ວຍໃຫ້ເຂດປົກຄອງສາມາດກວດເບິ່ງວ່າ ທ່ານມີເງື່ອນໄຂໄດ້ຮັບການຄຸ້ມຄອງແບບບໍ່ເສຍຄ່າ ຫຼື ລາຄາຕໍ່າ ຫຼື ບໍ່. |
| ຂ້າພະເຈົ້າຈະຖືກຍົກເລີກຈາກການຄຸ້ມຄອງ ຂອງ Medi-Cal ບໍ ຖ້າຂ້າພະເຈົ້າໄດ້ຮັບເງິນລ້ຽງດູ ໃນຊ່ວງທີ່ມີການປະກາດພາວະສຸກເສີນດ້ານ ສາທາລະນະສຸກຈາກພະຍາດໂຄວິດ-19? | **ຄໍາຕອບຂອງ ເຂດປົກຄອງ/ບັນດາແຜນການດູແລແບບມີການຄຸ້ມຄອງ/ ຄູ່ຮ່ວມງານໃນຊຸມຊົນ**: ກະລຸນາລາຍງານການປ່ຽນແປງດ້ານລາຍຮັບໃຫ້ແກ່ ຫ້ອງການເຂດປົກຄອງປະຈໍາທ້ອງຖິ່ນຂອງທ່ານ. ຖ້າລາຍຮັບຂອງທ່ານເພີ່ມຂຶ້ນ ຫຼື ຄອບຄົວຂອງທ່ານມີການປ່ຽນແປງ, ເມື່ອໃດທີ່ການປະກາດພາວະສຸກເສີນດ້ານສາທາລະນະສຸກຈາກພະຍາດໂຄວິດ-19 ຍັງຄົງສືບຕໍ່ໄປ, ທ່ານຈະບໍ່ສູນເສຍການຄຸ້ມຄອງຂອງ Medi-Cal ຂອງທ່ານໄປ. |
| ຂ້າພະເຈົ້າໄດ້ຍ້າຍບ່ອນຢູ່. ຂ້າພະເຈົ້າຄວນແຈ້ງໃຫ້ໃຜຊາບ ວ່າຕົນໄດ້ຍ້າຍບ່ອນຢູ່ແລ້ວ? | **ຄໍາຕອບຂອງເຂດປົກຄອງ**: ພວກເຮົາສາມາດອັບເດດທີ່ຢູ່ຂອງທ່ານໄດ້. ທ່ານສາມາດຈະລາຍງານການປ່ຽນແປງນີ້ໄດ້ທາງໂທລະສັບ, ທາງອອນລາຍ, ຈົດໝາຍ, ແຟັກ ຫຼື ໂດຍການຊ້ອງໜ້າ.<br><br>**ຄໍາຕອບຂອງແຜນການດູແລແບບມີການຄຸ້ມຄອງ**: ພວກເຮົາສາມາດອັບເດດທີ່ຢູ່ຂອງທ່ານໄດ້ ສໍາລັບແຜນການດູແລແບບມີການຄຸ້ມຄອງຂອງທ່ານ. ມັນເປັນສິ່ງສໍາຄັນທີ່ພວກເຮົາຈະໄດ້ແບ່ງປັນຂໍ້ມູນນີ້ໃຫ້ແກ່ ເຂດປົກຄອງ |

| | |
|---|---|
| | ເພື່ອໃຫ້ທ່ານສາມາດສືບຕໍ່ໄດ້ຮັບແຈ້ງການທີ່ສຳຄັນຕ່າງໆ ກ່ຽວກັບ Medi-Cal ຂອງທ່ານ. ທ່ານຕົກລົງເຫັນດີບໍ? ຖ້າທ່ານບໍ່ຢາກໃຫ້ພວກເຮົາແບ່ງປັນທີ່ຢູ່ໃໝ່ຂອງທ່ານໃຫ້ແກ່ຫ້ອງການເຂດປົກຄອງປະຈຳທ້ອງຖິ່ນຂອງທ່ານ, ທ່ານຈະຕ້ອງໄດ້ຕິດຕໍ່ຫາເຂົາເຈົ້າໂດຍກົງ ແລະ ແຈ້ງຂໍ້ມູນອັບເດດໃໝ່ຂອງທ່ານ. [ແຊກຂໍ້ມູນຕິດຕໍ່ຂອງເຂດປົກຄອງປະຈຳທ້ອງຖິ່ນ]<br><br>**ຄຳຕອບຂອງຄູ່ຮ່ວມງານໃນຊຸມຊົນ**: ກະລຸນາຕິດຕໍ່ຫ້ອງການເຂດປົກຄອງປະຈຳທ້ອງຖິ່ນຂອງທ່ານ ເພື່ອແຈ້ງທີ່ຢູ່ໃໝ່ຂອງທ່ານ ເພື່ອຮັບປະກັນໃຫ້ການຄຸ້ມຄອງຂອງ Medi-Cal ຂອງທ່ານສືບຕໍ່ໄປ. [ແຊກຂໍ້ມູນຕິດຕໍ່ຂອງເຂດປົກຄອງປະຈຳທ້ອງຖິ່ນ] |

| **[ບົດເວົ້າໃນການໂທແບບ IVR]** |
|---|
| ຖ້າທ່ານໄດ້ຍ້າຍບ່ອນຢູ່ພາຍໃນສອງປີຜ່ານມາ, ກະລຸນາແຈ້ງທີ່ຢູ່ໃໝ່ຂອງທ່ານໃຫ້ແກ່ຫ້ອງການ Medi-Cal ໃນເຂດປົກຄອງປະຈຳທ້ອງຖິ່ນຂອງທ່ານ ເພື່ອຮັບປະກັນໃຫ້ທ່ານສືບຕໍ່ໄດ້ຮັບຂໍ້ມູນທີ່ສຳຄັນກ່ຽວກັບການຄຸ້ມຄອງຂອງ Medi-Cal ຂອງທ່ານ. |
| ຖ້າຄອບຄົວຂອງທ່ານມີການປ່ຽນແປງ ເຊັ່ນ: ລາຍຮັບ, ບຸກຄົນໃດໜຶ່ງຖືພາ, ມີສະມາຊິກໃໝ່ເຂົ້າມາໃນຄອບຄົວ ຫຼື ປ່ຽນທີ່ຢູ່ໃໝ່, ກະລຸນາລາຍງານການປ່ຽນແປງເຫຼົ່ານັ້ນໃຫ້ແກ່ຫ້ອງການ Medi-Cal ໃນເຂດປົກຄອງປະຈຳທ້ອງຖິ່ນຂອງທ່ານ ໃຫ້ໄວເທົ່າທີ່ຈະໄວໄດ້. |
| ຖ້າຂໍ້ມູນຕິດຕໍ່ຂອງທ່ານ (ເບີໂທລະສັບ, ອີເມວ, ທີ່ຢູ່ໄປສະນີ) ມີການປ່ຽນແປງ, ກະລຸນາລາຍງານທຸກການປ່ຽນແປງໃຫ້ແກ່ຫ້ອງການ Medi-Cal ໃນເຂດປົກຄອງປະຈຳທ້ອງຖິ່ນຂອງທ່ານ ທາງອອນລາຍ ຫຼື ທາງໂທລະສັບ, ອີເມລວ, ແຟັກ ຫຼື ໂດຍການຊ້ອງໜ້າ. |